ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

INEWS ຂ່າວ

ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ໜ່ວຍຊາວໜຸ່ມ ທຫລ.ຊຂ ເຜີຍແຜ່ເອກະສານ

## ແນະນຳກ່ຽວກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ຂອງ ຊປປ ລາວ



ໃນວັນທີ **14** ກໍລະກົດ **2020** ໜ່ວຍຊາວໜຸ່ມ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ໄດ້ຈັດກອງປະຊຸມເຜີຍແຜ່ເອກະສານ ແນະນຳກ່ຽວກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ຂອງ ຊປປ ລາວ ຂຶ້ນທີ່ຫ້ອງປະຊຸມ ທຫລ.ຊຂ ໂດຍພາຍໃຕ້ການເປັນປະທານຂອງ ສະຫາຍ ສົມສັກ ທຳມະວົງ ເລຂາໜ່ວຍຊາວໜຸ່ມ ທຫລ.ຊຂ, ໃຫ້ກຽດເຂົ້າຮ່ວມມີ ສະຫາຍ ວິສອນ ໄຊສົງຄາມ ເລຂາໜ່ວຍພັກ ຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ຜູ້ຊີ້ນຳວຽກງານສາມອົງການຈັດຕັ້ງ, ມີ ຄະນະສາຂາ, ຄະນະພະແນກ ແລະ ສະມາຊິກຊາວໜຸ່ມ ເຂົ້າຮ່ວມຫຼາຍກວ່າ 50 ສະຫາຍ.

ໃນພິທີ ສະຫາຍ ສົມສັກ ທຳມະວົງ ເລຂາໜ່ວຍຊາວໜຸ່ມ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ໄດ້ມີຄຳຄິດເຫັນ ແລະ ກ່າວເປີດກອງປະຊຸມຢ່າງເປັນທາງການ ເຊິ່ງຈຸດປະສົງໃນການຈັດກອງປະຊຸມເຜີຍແຜ່ເອກະສານໃນຄັ້ງນີ້ ກໍ່ເພື່ອໃຫ້ບັນດາສະມາຊິກຊາວໜຸ່ມ ທຫລ.ຊຂ ທຸກສະຫາຍ ມີຄວາມຮັບຮູ້-ເຂົ້າໃຈ ແລະ ກຳແໜ້ນບັນດາເນື້ອໃນ ແລະ ວິທີການໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ. ພ້ອມທັງຜ່ານບົດສະຫຼຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ໃນໄລຍະຜ່ານມາ.

ຫຼັງຈາກນັ້ນ, ສະຫາຍ ນາງ ຈັນສະໝອນ ຈັນທິວົງ ຮອງເລຂາໜ່ວຍຊາວໜຸ່ມ ທຫລ.ຊຂ ໄດ້ຂຶ້ນຜ່ານເອກະສານບົດແນະນຳການປະເມີນສະມາຊິກ ແລະ ຮ່າງບົດສຳຫຼວດຂອງບຸກຄົນປະເມີນຜົນການ

ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ຂອງໜ່ວຍຊາວໜຸ່ມ ທຫລ.ຊຂ. ພ້ອມດຽວກັນນີ້, ບັນດາສະມາຊິກ ຊາວໜຸ່ມ ທຫລ.ຊຂ ກໍ່ໄດ້ມີຄໍາຄິດເຫັນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ຢ່າງເປັນຂະບວນຟົດຟື້ນ.






ໃນຕອນທ້າຍ ສະຫາຍ ປະທານກອງປະຊຸມຍັງໄດ້ເນັ້ນໜັກ ບັນດາຜູ້ເຂົ້າຮ່ວມກອງປະຊຸມ ກໍ່ຄື ສະມາຊິກຊາວໜຸ່ມໜ່ວຍ ທຫລ.ຊຂ ທຸກສະຫາຍໃຫ້ພ້ອມກັນອອກແຮງແຂ່ງຂັນປະຕິບັດເນື້ອໃນຂໍ້ແຂ່ງຂັນ 4 ບຸກ ໃຫ້ປະກົດຜົນເປັນຈິງ, ຝຶກຝົນຫຼໍ່ຫຼອມ-ຮໍ່າຮຽນວັດທະນະທໍາ, ຮູ້ນໍາໃຊ້ວິທະຍາສາດ-ເຕັກໂນໂລຊີ, ມີຄຸນສົມບັດສິນທໍາປະຕິວັດ, ຮໍ່າຮຽນພາສາຕ່າງປະເທດ, ພ້ອມທັງເພີ່ມທະວີຮັດແໜ້ນຄວາມສາມັກຄີທັງພາຍໃນ ແລະ ພາຍນອກໃຫ້ມີຄວາມແໜ້ນແຟ້ນຍິ່ງຂຶ້ນ.

**✍ ຂ່າວ + ພາບ: ສຸກສະຫວັນ ພົມມະວົງ**